ສໍານັກງານໃຫຍ່

ເລກທີ: 081 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 20 OCT 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາກະແຊັດສໍາຮອງຕູ້ຝາກເງິນ CDM ແລະ CRM.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈໍາໜ່າຍ ເພື່ອມານໍາໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ.ດ | ລາຍການ ແລະ ສະເປັກ | ຈໍານວນ |
|---|---|---|
| 1. | **ກະແຊັດສໍາຮອງຕູ້ຝາກເງິນ CDM**<br>- Compatible with SS31 NCR CDM Model.<br>- One Kit Contains 4 Currency Cassette Deposit<br>Deposit technology<br>- Intelligent Cash Deposit and Recycling Options – Choice of Cash Acceptors and Recycler. Accepts and validates up to 200 new notes per transaction*<br>- Supports multi-currency deposit, remote download of templates<br>- Scalable Deposit Module – 1 slot for cash and cheque deposit. Can handle cheque and cash as a separate transaction but also mixed media (SW dependent). Up to 2,000 notes and 1,600 cheques capacity<br>- Up to 4 deposit or recycling cassettes with up to 235mm capacity or up to 2,300 new notes per cassette.* | 11 ຊຸດ |
| 2. | **ກະແຊັດສໍາຮອງຕູ້ຝາກເງິນ CRM**<br>- Hitachi-Omron Terminal Solution - Cassette Units<br>- Model: HT-2845-VS<br>Number of Cassette<br>- 04 Recycling Box (RB) - Approx. 2,800 notes/ per box<br>- 01 Acceptance Box (AB) - Approx. 2,450 notes/ per box<br>Technical description<br>Acceptable denomination:<br>- Deposit: Max. 120 Denominations includes Lao Kip, Thai Bath and US Dollar<br>- Dispense: Max. 04 Denominations<br>Maximum transactions notes:<br>- Deposit: Max. 200 notes/ transaction<br>- Dispense: Max. 200 notes/ transaction<br>Counter speed: Approx. 8 notes/second | 29 ຊຸດ |

**ເງື່ອນໄຂຂອງບໍລິສັດ ຫ້າງຮ້ານ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

- **<u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>**



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ, ຕ້ອງມີວິຊາການສະເພາະ ແລະ ມີປະສົບການຢ່າງໜ້ອຍ 03 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019).
2. ເອກະສານກ່ຽວກັບມາດຕະຖານເຕັກນິກແມ່ນໃຫ້ລະບຸຄົບຖ້ວນກ່ຽວກັບວັດສະດຸທີ່ຈະຜະລິດ, ສະຖານທີ່ຜະລິດສິນຄ້າ, ກຳນົດເວລາສົ່ງເຄື່ອງ, ການຮັບປະກັນສິນຄ້າ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກຈະປິດຮັບວັນທີ **03/11/2020 ເວລາ 11:00 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ ***<u>ເອກະສານຊອງທີ 2 (ປິດຊອງ)</u>***.

1. ໃບສະເໜີລາຄາໃຫ້ລະບຸລາຄາ ແລະ ລວມອາກອນມູນຄ່າເພີ່ມທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນທີ **10/11/2020 ເວລາ 09:30 ໂມງ** ແມ່ນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 10/11/2020)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ ***<u>ໝາຍເຫດ:</u>*** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

 * ງວດທີ 1: ຊຳລະ 90% ຂອງມູນຄ່າພາຍໃນເວລາ 30 ວັນ ຫຼັງຈາກທີ່ໄດ້ຮັບເຄື່ອງຖືກຕ້ອງຄົບຖ້ວນ.

 * ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ບັນທະລາດ ແກ້ວປະເສີດ**

**ສອບຖາມລາຍລະອຽດເພີ່ມເຕີມ** bidcommittee@bcel.com.la

ຫຼືຕິດຕໍ່ ທ່ານ ພູວອນ ສີອິນໄຊ: 020 59559889